# Global Fund's Matching Funds Progress

**IBF1 Lab Systems Strengthening**

**National Centre for Laboratory and Epidemiology (NCLE)**

**21 August 2026**

# IBF1 : Lab Systems Strengthening

## 2.3.2.1 ການປັບປຸງຄວາມອາດສາມາດກ່ຽວກັບ ລະບົບຫ້ອງວິເຄາະ ແລະ ໜ່ວຍງານຄຸ້ມຄອງຄຸນະພາບ (QA)

**CURRENT STATUS:**

**MF 3:** ການສ້າງຕັ້ງໜ່ວຍງານ QM ແລະ ການຈັດຈ້າງບຸກຄະລະກອນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກໍາທີ່ກ່ຽວຂ້ອງກັບ MF QMS

**(completed)**

- ປະຈຸບັນບຸກຄະລາກອນປະຕິບັດວຽກງານຕາມ TOR

**CHALLENGES:**

**KEY ACTION:**

# IBF1 : Lab Systems Strengthening

## 2.3.2.2 ການພັດທະນາ ຄູ່ມື ນະໂຍບາຍພື້ນຖານສໍາລັບຫ້ອງວິເຄາະແບບເຊື່ອມສານ, ຄໍາແນະນໍາ ແລະ ຂັ້ນຕອນມາດຕະຖານດໍາເນີນງານ

**CURRENT STATUS:**

**MF 26:** ກອງປະຊຸມວິຊາການ ທົບທວນ ແລະ ເອກະພາບກັນກ່ຽວກັບຄູ່ມື  ມາດຕະຖານແຫ່ງຊາດດ້ານວຽກງານວິເຄາະການແພດໃນ ສປປລາວ **(In progress)**

- ຂໍ້ຕົກລົງລັດຖະມົນຕີໄດ້ອະນຸມັດແລ້ວ, ຄາດຄະເນຈັດເດືອນກັນຍາ

**MF27:** ຈັດພິມ ຄູ່ມືມາດຕະຖານແຫ່ງຊາດດ້ານວຽກງານວິເຄາະການແພດໃນ ສປປລາວ **(In progress)**

- ປະຈຸບັນລໍຖ້າການອະນຸມັດຂໍ້ຕົກລົງຈາກລັດຖະມົນຕີ

**MF28:** ກອງປະຊຸມວິຊາການ ເພື່ອທົບທວນນະໂຍບາຍ ສໍາລັບການບົ່ງມະຕິດ້ານວິເຄາະ ແບບເຊື່ອມສານໃນສປປ ລາວ  **(In progress)**

- ຂໍ້ຕົກລົງລັດຖະມົນຕີຖືກອະນຸມັດແລ້ວ, ປະຈຸບັນກໍາລັງດໍາເນີນການຍື່ນຂໍເບີກງົບປະມານຢູ່ກົມແຜນການ ແລະ ການເງິນ, ຄາດຄະເນຈັດໃສ່ເດືອນກັນຍາ

**MF29:** ຈັດພິມນະໂຍບາຍ ສໍາລັບການບົ່ງມະຕິດ້ານວິເຄາະ ແບບເຊື່ອມສານໃນສປປ ລາວ **(In progress)**

- ເອກະສານກໍາລັງດໍາເນີນການຮອດຫ້ອງການກະຊວງສາທາ

**CHALLENGES:**

**KEY ACTIONS:**

# IBF1 : Lab Systems Strengthening

## 2.3.2.4 ການເສີມສ້າງຄວາມເຂັ້ມແຂງ ດ້ານຄວາມປອດໄພທາງຊີວະພາບ /ຄວາມອາດສາມາດ ດ້ານຄວາມປອດໄພທາງຊີວະພາບ

**CURRENT STATUS:**

**MF10:** ຈັດກອງປະຊຸມ ປຶກສາຫາລືປັບປຸງປຶ້ມຄູ່ມືຄວາມປອດໄພດ້ານຊີວະພາບໃນຫ້ອງວິເຄາະແຫ່ງຊາດ **(Completed)**

- ກອງປະຊຸມທັງ 3ຄັ້ງ ແມ່ນສຳເລັດແລ້ວ
- ປະຈຸບັນກຳລັງຮຽບຮຽງຄູ່ມືດັ່ງກ່າວຕາມຄຳຄິດເຫັນຂອງຄະນະກຳມະການ

**MF11:** ຈັດພິມປຶ້ມຄູ່ມືຄວາມປອດໄພດ້ານຊີວະພາບໃນຫ້ອງວິເຄາະແຫ່ງຊາດ **(In progress)**

- ເອກະສານກຳລັງດຳເນີນການຮອດຫ້ອງການກະຊວງສາທາ

**CHALLENGES:**

- ຄູ່ມືຄວາມປອດໄພດ້ານຊີວະພາບໃນຫ້ອງວິເຄາະແຫ່ງຊາດທີ່ມີແມ່ນປຸງປີ 2016 ແລະ ອາດຈະບໍ່ແທດເໝາະກັບສະພາບປະຈຸບັນ. ເຊິ່ງຕ້ອງໃຊ້ເວລາໃນການທົບທວນເອກະສານອ້າງອີງ ແລະ ປັບປຸງເນື້ອໃນໃຫ້ສົມບູນ.
- ການປັບປຸງຄູ່ມືດັ່ງກ່າວ ທາງດ້ານເນື້ອຕ້ອງໄດ້ມີສ່ວນຮ່ວມຈາກຜູ້ຊ່ຽວຊານຫຼາຍພາກສ່ວນເພື່ອໃຫ້ສົມບູນ ແລະ ແທດເໝາະກັບການຈັດຕັ້ງປະຕິບັດຢູ່ໃນ ສປປ ລາວ.

**KEY ACTIONS:**

# IBF1 : Lab Systems Strengthening

## 2.3.2.4 ການເສີມສ້າງຄວາມເຂັ້ມແຂງ ດ້ານຄວາມປອດໄພທາງຊີວະພາບ /ຄວາມອາດສາມາດ ດ້ານຄວາມປອດໄພທາງຊີວະພາບ (ຕໍ່)

**CURRENT STATUS:**

**MF 13:** ຄັດເລືອກ ບຸກຄະລາກອນສາທາລະນະສຸກ ຈຳນວນ 12 ຄົນ ເພື່ອເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບການຮັບຮອງ-ຢັ້ງຢືນ ຕູ້ປອດເຊື້ອດ້ານຊີວະພາບລະດັບພື້ນຖານຢູ່ປະເທດໄທ **(Completed)** **ຈະໄດ້ຈັດ 2 ຮອບ:**

- ຮອບທີ 1. ໄດ້ຈັດຕັ້ງປະຕິບັດສຳເລັດໃນວັນທີ 18-23/05/2026
- ຮອບທີ 2. ສໍາລັບການຄັດເລືອກ ບຸກຄະລາກອນສາທາລະນະສຸກ ຈຳນວນ 3 ຄົນ ທີ່ຈະໄປ ອົບຮົມຢູ່ໄທໃນຮອບ 2 ແມ່ນຖືກຍົກເລີກຍ້ອນເງິນອະນຸມັດບໍ່ທັນ ແຕ່ການອົບຮົມໄດ້ດໍາເນີນ ແລ້ວ

**MF14**: ຄັດເລືອກ ບຸກຄະລາກອນສາທາລະນະສຸກ ຈຳນວນ 3 ຄົນ ຜູ້ທີ່ຜ່ານການຄັດເລືອກ ແລະ ໄດ້ ຖືກຮັບຮອງ-ຢັ້ງຢືນຕູ້ປອດເຊື້ອທາງຊີວະພາບຂັ້ນພື້ນຖານ (NCLE& ມະຫາວິທະຍາໄລສຸຂະພາບ) ເພື່ອເຂົ້າຮ່ວມການຝຶກອົບຮົມໃນຫຼັກສູດ BSC ລະດັບສູງ ຢູ່ປະເທດໄທ **(In progress)**

- ຍື່ນເອກະສານຂໍອະນຸມັດງົບປະມານຮອດກົມຄວບຄຸມພະຍາດຕິດຕໍ່

**MF 15:** ກວດຢັ້ງຢືນຕູ້ປອດເຊື້ອ 40ຕູ້ ໃນຫ້ອງວິເຄາະໂຮງໝໍ ແຂວງ 17ແຫ່ງ ແລະ ໃນຫ້ອງວິເຄາະ ລະດັບສູນກາງ 6 ແຫ່ງ **(In progress)**

- ຂໍ້ຕົກລົງຈາກລັດຖະມົນຕີຖືກອະນຸມັດແລ້ວ
- ກໍາລັງດໍາເນີນກິດຈະກໍາ ເຊິ່ງສໍາເລັດແລ້ວ 6 ແຂວງ ພາກໃຕ້. ຍັງພາກກາງ ແລະ ພາກເໜືອ

**CHALLENGES:**

**MF14:** ເນື່ອງຈາກເນື່ອງຈາກ ການອົບຮົມຢູ່ໄທໄດ້ຖືຈັດກ່ອນ ທີ່ຂະບວນການອະນຸມັດດ້ານ ງົບປະມານສໍາລັບບຸຄະລາກອນ ທີ່ຈະໄປເຂົ້າຮ່ວມ ດັ່ງນັ້ນຈຶ່ງຖື ຍົກເລີກກິດຈະກໍານີ້

**KEY ACTIONS:**

**MF14:** ຈະນໍາເງິນຂອງ ກິດຈະກໍາທີ່ຖືກຍົກເລີກນີ້ໄປ ໝູນໃຊ້ໃນກິດຈະກໍາອື່ນທີ່ເງິນ ບໍ່ພໍ.

**MF15:** ສືບຕໍ່ດໍາເນີນການກວດ ຢັ້ງຢືນຕູ້ປອດເຊື້ອໃນພາກກາງ ແລະ ພາກເໜືອທີ່ຍັງເຫຼືອ

# IBF1 : Lab Systems Strengthening

## 2.3.2.5 ການສ້າງຕັ້ງເຄືອຂ່າຍການຂົນສົ່ງຕົວຢ່າງ

**CURRENT STATUS:**

**MF16:** ກອງປະຊຸມປຶກສາຫາລື ແລະ ທົບທວນດ້ານວິຊາການ ໃນວຽກງານການຂົນສົ່ງຕົວຢ່າງແບບເຊື່ອມສານ (iSRS) ສໍາລັບຈຸດທົດລອງ **(In progress)**

- ໄດ້ຍື່ນເອກະສານຂໍອະນຸມັດງົບປະມານໃຫ້ທີມ NPCO ກວດແຜນ
- ມີແຜນຈັດຕັ້ງປະຕິບັດໃນ Q4 ຫຼັງຈາກທີ່ກິດຈະກໍາວຽກງານການຂົນສົ່ງຕົວຢ່າງແບບເຊື່ອມສານຖືກຈັດຕັ້ງປະຕິບັດສໍາເລັດ

**MF18:** ຈັດພິມ SOP ສໍາລັບການຂົນສົ່ງຕົວຢ່າງ, ການຫຸ້ມຫໍ່, ການຈັດສົ່ງ ແລະ ການຈັດເກັບຕົວຢ່າງ **(In progress)**

- ຢູ່ໃນຂະບວນການຈັດຊື້ຈັດຈ້າງ

**CHALLENGES:**

**KEY ACTIONS:**

# IBF1 : Lab Systems Strengthening

## 2.3.2.5 ການສ້າງຕັ້ງເຄືອຂ່າຍການຂົນສົ່ງຕົວຢ່າງ (ຕໍ່)

**CURRENT STATUS:**

**LCHMP61HP0921:** ການຈັດຊື້ອຸປະກອນ ແລະ ເຄື່ອງໃຊ້ສິ້ນເປືອງ ສໍາລັບວຽກງານຂົນສົ່ງຕົວຢ່າງແບບເຊື່ອມສານ ປີ 2026 (ຈັດຊື້ພາຍນອກ - ໂດຍຜ່ານ GDF) **(In progress)** ການຈັດຊື້ຈະມີ 2 ຮອບ

- ຮອບທີ 1 ໄດ້ຮັບເຄື່ອງຄົບຕາມຈ□ານວນແລ້ວໃນວັນທີ 14/7/2026
- ຮອບທີ 2 ໄດ້ຍົກເລີກແລ້ວ

**LCHMP61HP0923:** ການຈັດຊື້ອຸປະກອນ ແລະ ເຄື່ອງໃຊ້ສິ້ນເປືອງ ສໍາລັບວຽກງານຂົນສົ່ງຕົວຢ່າງແບບເຊື່ອມສານ ປີ 2026 (ຈັດຊື້ພາຍໃນ) **(In progress)**

- ໄດ້ຮັບເຄື່ອງຄົບຕາມຈໍານວນແລ້ວໃນວັນທີ 10/7/2026

**CHALLENGES:**

- ການຈັດຊື້ອຸປະກອນມີຂະບວນການທີ່ໃຊ້ເວລາຫຼາຍສົມຄວນ ໂດຍສະເພາະໃນຮອບທີ2 ແມ່ນໄດ້ຖືກຍົກເລີກ

**KEY ACTIONS:**

ງົບປະມານຈັດຊື້ທີ່ໄດ້ຍົກເລີກແມ່ນໄດ້ນໍາໄປຈັດສັນຄືນໃຫມ່ເພື່ອເຮັດກິດຈະກໍາອື່ນ

# IBF1 : Lab Systems Strengthening

## 2.3.2.1 ການປັບປຸງຄວາມອາດສາມາດກ່ຽວກັບ ລະບົບຫ້ອງວິເຄາະ ແລະ ໜ່ວຍງານຄຸ້ມຄອງຄຸນະພາບ (QA)

**CURRENT STATUS:**

**MF 36 :** ຈັດຊື້ຈັດຈ້າງຊ່ຽວຊານມາດຳເນີນການສຳຫຼວດ ຂີດຄວາມສາມາດ ຂອງບຸກຄະລາກອນທີ່ເຮັດວຽກໃນດ້ານວິເຄາະ ແລະ ສ້າງແຜນພັດທະນາຄວາມສາມາດພ້ອມທັງປະເມີນຄ່າໃຊ້ຈ່າຍໃນການຝຶກອົບຮົມ ແລະ ການພັດທະນາທັກສະທີ່ຈຳເປັນບຸກຄະລາກອນທີ່ເຮັດວຽກດ້ານວິເຄາະແຕ່ລະປະເພດທີ່ແຕກຕ່າງກັນ **(In progress)**

- ຂະບວນການຈັດຈ້າງຊ່ຽວຊານສຳເລັດແລ້ວ
- ປະຈຸບັນຊ່ຽວຊານໄດ້ເລີ່ມດຳເນີນວຽກງານຕາມສັນຍາ.

**ກິດຈະກຳເພີ່ມເຂົ້າໃໝ່:** ການສຳຫຼວດປະເມີນຄວາມສາມາດ ຂອງບຸກຄະລາກອນທີ່ເຮັດວຽກໃນດ້ານວິເຄາະ **(In progress)**

- ກຳລັງລໍຖ້າທີມງານ Global fund ມີຄຳເຫັນກ່ອນຈຶ່ງສາມາດດຳເນີນເອກະສານໄດ້

**CHALLENGES:**

**KEY ACTIONS:**

# IBF1 : Lab Systems Strengthening

## 2.3.2.4 ການເສີມສ້າງຄວາມເຂັ້ມແຂງ ໃນລະບົບການຄຸ້ມຄອງຂໍ້ມູນຫ້ອງວິເຄາະ

### CURRENT STATUS:

**MF37**: ຈັດຊື້ຈັດຈ້າງຊ່ຽວຊານ ເພື່ອປະເມີນລະບົບຂໍ້ມູນຂ່າວສານໃນຫ້ອງວິເຄາະແຕ່ລະປະເພດທີ່ກຳລັງນຳໃຊ້ໃນປະຈຸບັນ ແລະ ຈັດກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງເພື່ອກຳນົດຄວາມຕ້ອງການທີ່ຈະເປັນແນວທາງໃນການລົງທຶນໃນອະນາຄົດ; ພັດທະນາແຜນການຈັດຕັ້ງປະຕິບັດ LIMS ແຫ່ງຊາດເພື່ອເປັນແນວທາງໃນການລົງທຶນໃນອະນາຄົດໃນລະບົບ LIMS **(In progress)**

- ຂໍ້ຕົກລົງຖືກອະນຸມັດແລ້ວ
- ປະຈຸບັນກຳລັງຢູ່ໃນຂະບວນການຈັດຈ້າງ

**ກິດຈະກຳເພີ່ມເຂົ້າໃໝ່**: ປະເມີນລະບົບຂໍ້ມູນຂ່າວສານໃນຫ້ອງວິເຄາະແຕ່ລະປະເພດທີ່ກຳລັງນຳໃຊ້ໃນປະຈຸບັນ **(In progress)**

- ກຳລັງລໍຖ້າທີມງານ Global fund ມີຄຳເຫັນກ່ອນຈຶ່ງສາມາດດຳເນີນເອກະສານໄດ້

### CHALLENGES:

- ການຈັດຊື້ຈັດຈ້າງຊ່ຽວຊານມີຄວາມສັບຊ້ອນ ແລະ ຕ້ອງການປຶກສາຫາລືຈາກໜ່ວຍງານທີ່ກ່ຽວຂ້ອງ
- ຂຶ້ນງົບປະມານຈັດຊື້ຈັດຈ້າງຊ່ຽວຊານມາເຮັດວຽກນີ້ເບື້ອຕົ້ນສຳລັບຄົນພາຍໃນປະເທດ ແຕ່ເຫັນວ່າມີຄົນທີ່ຊ່ຽວຊານດ້ານນີ້ຫາຍາກຫຼາຍ ຖ້າຈະປັບຈັດຈ້າງຜູ້ຊ່ຽວຊານຈາກສາກົນ ແມ່ນງົບປະມານມີຈຳກັດ

### KEY ACTIONS:

ມີການປຶກສາຫາລືກັບໜ່ວຍງານທີ່ກ່ຽວຂ້ອງເພື່ອຂໍຄຳແນະນຳໃນການດຳເນີນຂະບວນການຈັດຊື້ຈັດຈ້າງຊ່ຽວຊານມາເຮັດວຽກ

# IBF1 : Lab Systems Strengthening

## ການຈັດຕັ້ງປະຕິບັດ ວຽກງານການຂົນສົ່ງຕົວຢ່າງແບບເຊື່ອມສານ ສໍາລັບຈຸດທົດລອງໃນ ສປປ ລາວ (iSRS)

**MF 30:** ກະກຽມສະຖານທີ່, ຂະບວນການເຮັດວຽກແລະກົນໄກການຂົນສົ່ງຢູ່ໃນຈຸດພື້ນທີ່ຖືກເລືອກສໍາລັບເຮັດການທົດລອງ: 3 ແຂວງຄື: ຈໍາປາສັກ, ຄໍາມ່ວນ ແລະ ອຸດົມໄຊ; 3 ເມືອງ/ແຂວງ (9ເມືອງ); 2 ສຸກສາລາ/ເມືອງ (18 ສຸກສາລາ) **(In progress)**

**ສະຫຼຸບຜົນການສໍາຫຼວດ:**

- ດ້ານການບໍລິຫານ ແລະ ປະສານງານ: ຂັ້ນແຂວງ ແລະ ເມືອງມີຄວາມພ້ອມດີ, ແຕ່ຂັ້ນສຸກສາລາບາງແຫ່ງຍັງຂາດຜູ້ປະສານງານຫຼັກ ແລະ ພົບອຸປະສັກດ້ານສັນຍານໂທລະສັບທີ່ເຮັດໃຫ້ການລາຍງານລ່າຊ້າ.
- ດ້ານການເງິນ (ບັນຫາຫຼັກ): ຍັງບໍ່ມີສັນຍາຂົນສົ່ງທີ່ເປັນທາງການ, ພະນັກງານແພດຕ້ອງໄດ້ອອກເງິນ ຕົນເອງຈ່າຍຄ່າຂົນສົ່ງໄປກ່ອນແລ້ວຈຶ່ງເບີກຄືນນໍາຫຼັງ ເບີກຄືນເປັນໄຕມາດ ພະນັກງານທີ່ບໍ່ສາມາດອອກເງິນກ່ອນ ຈຶ່ງບໍ່ໄດ້ສົ່ງຕົວຢ່າງ.
- ດ້ານການຫຸ້ມຫໍ່: ຂັ້ນເມືອງ ແລະ ສຸກສາລາບໍ່ໄດ້ປະຕິບັດການຫຸ້ມຫໍ່ 3 ຊັ້ນຕາມມາດຕະຖານ.
- ການຂົນສົ່ງ: ການຂົນສົ່ງຍັງອາໄສລົດຈັກສ່ວນຕົວ ຫຼື ຝາກລົດໂດຍສານເປັນຫຼັກ ແລະ ມີການພັກຕົວຢ່າງລໍຖ້າການຂົນສົ່ງດົນເກີນໄປ (ສະເລ່ຍ 3-7 ວັນ). ການສົ່ງຕົວຢ່າງຈາກຈຸດສັ່ງກວດສົ່ງໄປຫາຈຸດທີ່ມີຄວາມພ້ອມໃນການກວດຈຶ່ງໃຊ້ເວລາຫຼາຍວັນ. ສິ່ງຜົນເຮັດໃຫ້ການອອກຜົນກວດຫຼ້າຊ້າ ຫຼາຍກວ່າ 10ວັນ ແລະ ເຮັດໃຫ້ຄົນເຈັບໄດ້ຮັບການປິ່ນປົວຊ້າ.
- ດ້ານອຸປະກອນ ແລະ ຄວາມປອດໄພ: ຂັ້ນເມືອງ ແລະ ສຸກສາລາບໍ່ມີຊຸດອະນາໄມຕົວຢ່າງຕົກເຮ່ຍ (Spill Kit), ຂາດແຄນກ່ອງສົ່ງຕົວຢ່າງທີ່ໄດ້ມາດຕະຖານ ບາງບ່ອນໃຊ້ຮ່ວມກັບກ່ອງວັກຊີນ ແລະ ຍັງມີການໃຊ້ຕູ້ເຢັນເກັບຕົວຢ່າງຮ່ວມກັບວັກຊີນເຊິ່ງຜິດຫຼັກຄວາມປອດໄພທາງຊີວະພາບ.
- ດ້ານລະບົບຂໍ້ມູນຂ່າວສານ (IT): ການປ້ອນຂໍ້ມູນເຂົ້າລະບົບພົບຄວາມລ່າຊ້າ ຍ້ອນບັນຫາຄອມພິວເຕີເກົ່າ, ຂາດເຄື່ອງສໍາຮອງໄຟ (UPS), ໄຟຟ້າຕົກເລື້ອຍໆ ແລະ ສັນຍານອິນເຕີເນັດບໍ່ສະຖຽນ.

**CHALLENGES:**

- ການລົງສຸກສາລາບາງແຫ່ງໄປພົບຄວາມຍຸ້ງຍາກໃນການເດືອນທາງ ຍ້ອນຫົນທາງໄປຍັງລໍາບາກ ໂດຍສະເພາະຖ້າຝົນຕົກ
- ບາງບ່ອນແມ່ນຕ້ອງໄດ້ເດີນທາງຂ້າມນໍ້າຂ້າມບັກໂດຍໃຊ້ເຮືອ ແລະ ມີຄ່າໃຊ້ຈ່າຍສູງ.
- ສະພາບການຂາດແຄນນໍ້າມັນ ແລະ ລາຄາທີ່ແພງຂຶ້ນ

**KEY ACTIONS:**

# IBF1 : Lab Systems Strengthening

## ການຈັດຕັ້ງປະຕິບັດ ວຽກງານການຂົນສົ່ງຕົວຢ່າງແບບເຊື່ອມສານ ສໍາລັບຈຸດທົດລອງໃນ ສປປ ລາວ (iSRS)

**CURRENT STATUS:**

**MF 31:** ການຝຶກອົບຮົມຄູຝຶກ (ToT)ຂັ້ນແຂວງ ກ່ຽວກັບ ການເກັບກໍາຕົວຢ່າງ, ການຫຸ້ມຫໍ່, ການເກັບຮັກສາແລະການຂົນສົ່ງຕົວຢ່າງທີ່ມີຄວາມປອດໄພສໍາລັບບຸກຄະລາກອນສາທາລະນະສຸກຂັ້ນແຂວງ ແລະ ວິຊາການຫ້ອງວິເຄາະ **(Completed).**

- ໄດ້ສໍາເລັດການຈັດອົບຮົມຄູຝຶກໃນວັນທີ 22-26 ມິຖຸນາ 2026

**ຜົນທີ່ໄດ້ຮັບ ບັນລຸຕາມຄາດໝາຍທີ່ຕັ້ງໄວ້.ມີຜູ້ເຂົ້າຮ່ວມຂັ້ນແຂວງ 3ແຂວງຄື: ອຸດົມໄຊ, ຄໍາມ່ວນ ແລະ ຈໍາປາສັກ**

1. ນັກສໍາມະການກອນເຂົ້າໃຈລະບົບການເຮັດວຽກແບບເຊື່ອມສານ
2. ເຂົ້າໃຈລະບົບການຄຸ້ມຄອງຂໍ້ມູນສາມາດຄຸ້ມຄອງ ແລະ ປ້ອນຂໍ້ມູນລົງໃນລະບົບໄດ້
3. ຮັບຮູ້ມາດຕະຖານການຫຸ້ມຫໍ່ ແລະ ຂົນສົ່ງລະດັບຊາດ:
4. ຮັບຮູ້ດ້ານຄວາມປອດໄພທາງຊີວະພາບ (Biosafety)

**ຄໍາຄິດເຫັນຈາກທີ່ປະຊຸມ**

- ການຈັດສັນງົບປະມານ: ສູນວິເຄາະຮັບຜິດຊອບງົບ 3 ເດືອນໃນຈຸດທົດລອງ (ນອກເປົ້າໝາຍແມ່ນໃຊ້ງົບເດີມ).
- ການເບີກຈ່າຍ (ແກ້ບັນຫາແພດອອກເງິນກ່ອນ): ເຫັນດີໂອນງົບລ່ວງໜ້າ ແລະ ເບີກຈ່າຍເປັນຖ້ຽວຕາມກິໂລແມັດ (ຖ້າໄລຍະທາງສັ້ນ ແຕ່ທາງຍາກ ຕ້ອງໄດ້ນອນແຮມຄືນໃຫ້ມີໃບຢັ້ງຢືນ).
- ການປ້ອນຂໍ້ມູນ: ແພດວິເຄາະໂຮງໝໍແຂວງ (ຈຸດທົດລອງ) ຮັບຜິດຊອບປ້ອນຂໍ້ມູນເຂົ້າລະບົບ.

**ຂໍ້ສະເໜີແນະເພີ່ມເຕີມ**

- ການເງິນ: ຄວນປັບຄ່າຂົນສົ່ງໃຫ້ເໝາະສົມ ສໍາລັບເສັ້ນທາງທີ່ໃກ້ແຕ່ໃຊ້ເວລາເດີນທາງດົນ.
- ການຂົນສົ່ງ: ໃຫ້ກໍານົດມື້ສົ່ງຕົວຢ່າງທີ່ຕາຍຕົວ ແລະ ຊັດເຈນໃນແຕ່ລະຂັ້ນ.
- ການຝຶກອົບຮົມ: ຄວນຈັດອົບຮົມໃຫ້ບໍລິສັດຂົນສົ່ງ ແລະ ພະນັກງານທີ່ເຮັດວຽກຕົວຈິງ (ເພາະແພດສຸກສາລາສ່ວນໃຫຍ່ບໍ່ແມ່ນແພດວິເຄາະ).

**CHALLENGES:**

**KEY ACTIONS:**

ຈະໃຫ້ຄູຝຶກຂັ້ນແຂວງນໍາເອົາບົດຮຽນທີ່ໄດ້ເຂົ້າຮ່ວມຈາກການຝຶກອົບຮົມໄປຝຶກອົບຮົມໃຫ້ກັບເມືອງ ແລະ ສຸກສາລາທີ່ຕົນຮັບຜິດຊອບ

# IBF1 : Lab Systems Strengthening

## ການຈັດຕັ້ງປະຕິບັດ ວຽກງານການຂົນສົ່ງຕົວຢ່າງແບບເຊື່ອມສານ ສໍາລັບຈຸດທົດລອງໃນ ສປປ ລາວ (iSRS)

**CURRENT STATUS:**

**MF 32:** ການຝຶກອົບຮົມສໍາລັບບຸກຄະລາກອນສາທາລະນະສຸກ ແລະ ວິຊາການຫ້ອງວິເຄາະຂັ້ນເມືອງ ແລະ ສຸກສາລາ ໃນການເກັບກໍາຕົວຢ່າງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຂົນສົ່ງຕົວຢ່າງທີ່ມີຄວາມປອດໄພ **(In progress). ຢູ່ 3ແຂວງທົດລອງຄື: ແຂວງອຸດົມໄຊ, ຄໍາມ່ວນ ແລະ ຈໍາປາສັກ**

- ແຂວງຈໍາປາສັກໄດ້ຈັດສໍາເລັດແລ້ວ, ສໍາລັບແຂວງອຸດົມໄຊ ແລະ ແຂວງຄໍາມ່ວນແມ່ນກໍາລັງລົງຈັດຕັ້ງປະຕິບັດ.

**ຜົນໄດ້ຮັບສໍາລັບແຂວງຈໍາປາສັກ**

**1. ຈາກກອງປະຊຸມສໍາມະນາ**

ບຸກຄະລາກອນຂັ້ນເມືອງ ແລະ ສຸກສາລາເປົ້າໝາຍ ສາມາດເຂົ້າໃຈທິດສະດີ ແລະ ປະຕິບັດຕົວຈິງໄດ້ຢ່າງຖືກຕ້ອງຕາມມາດຕະຖານໃນການຫຸ້ມຫໍ່, ເກັບຮັກສາ, ຂົນສົ່ງຕົວຢ່າງ, ຄວາມປອດໄພທາງຊີວະພາບ ແລະ ການຈັດການກໍລະນີຕົວຢ່າງຕົກເຮ່ຍ. ພ້ອມທັງສາມາດເຂົ້າໃຈນໍາໃຊ້ແບບຟອມການຂົນສົ່ງຕົວຢ່າງແບບເຊື່ອມສານ, ປ້ອນຂໍ້ມູນລົງ Google Forms ແລະ ຂໍ້າໃຈລະບົບການລາຍງານ.

**2. ຜົນໄດ້ຮັບຈາກການລົງຊຸກຍູ້ພາກປະຕິບັດຕົວຈິງ**

ທີມງານໄດ້ລົງນໍາພາປະຕິບັດຕົວຈິງໃນທຸກຂັ້ນຕອນ ແລະ ຝຶກອົບຮົມກັບທີ່. ພ້ອມທັງໄດ້ແຈກຢາຍອຸປະກອນ ແລະ ກ່ອງສົ່ງຕົວຢ່າງສໍາເລັດ ປັດຈຸບັນສະຖານບໍລິການເປົ້າໝາຍແມ່ນມີຄວາມພ້ອມ ແລະ ສາມາດເລີ່ມຈັດຕັ້ງປະຕິບັດວຽກງານດ້ວຍຕົນເອງໄດ້ແລ້ວ.

**CHALLENGES:**

**MF32:**

- ພະນັກງານຂາດແຄນອຸປະກອນປ້ອງກັນສ່ວນບຸກຄົນ. ບາງໂຮງໝໍເມືອງ ແລະ ສຸກສາລາ ບໍ່ມີຕູ້ແຊ່ແຂງສະເພາະສໍາລັບ Ice packs, ເຊິ່ງຕ້ອງໄດ້ແຊ່ຮ່ວມກັບຕູ້ວັກຊີນ (ຜິດຫຼັກການຄວາມປອດໄພດ້ານຊີວະພາບ).
- ການເດີນທາງພົບຄວາມຫຍຸ້ງຍາກຍ້ອນເປັນລະດູຝົນ (ໂດຍສະເພາະສຸກສາລາປາກບ່ອງ).

**KEY ACTIONS:**

# IBF1 : Lab Systems Strengthening

## ການຈັດຕັ້ງປະຕິບັດ ວຽກງານການຂົນສົ່ງຕົວຢ່າງແບບເຊື່ອມສານ ສຳລັບຈຸດທົດລອງໃນ ສປປ ລາວ (iSRS)

**CURRENT STATUS:**

**MF 33:** ລົງຊຸກຍູ້ ຕິດຕາມຂັ້ນເມືອງ ແລະ ສຸກສາລາ ປະຈຳເດືອນໂດຍສຸມໃສ່ ມາດຕະການຄວບຄຸມຄວາມປອດໄພທາງຊີວະພາບ/ຄວາມໝັ້ນຄົງດ້ານຊີວະພາບ, ການຄຸ້ມຄອງຕົວຢ່າງ, ການຈັດການ ແລະ ຂະບວນການຂົນສົ່ງຕົວຢ່າງຢູ່ຈຸດທີ່ເຮັດທົດລອງ **(In progress)**

- ກຳລັງລໍຖ້າຂໍ້ຕົກລົງອະນຸມັດຈັດກິດຈະກຳ

**MF 34**: ທີມງານສູນກາງ (NCLE,CHAS, NTC,CMPE) ຮ່ວມກັບທີມງານຂັ້ນແຂວງລົງຊຸກຍູ້ຕິດຕາມ ຢູ່ຈຸດທົດລອງ ເພື່ອຊອກຫາຈຸດທີ່ຕ້ອງປັບປຸງ ໂດຍອີງຜົນການລົງຊຸກຍູ້ຕິດຕາມປະຈຳເດືອນຂອງທີມງານຂັ້ນແຂວງ **(In progress)**

- ເອກະສານຂໍງົບປະມານດຳເນີນການຮອດກົມແຜນການ ແລະ ການເງິນ

**MF 35:** ຄ່າໃຊ້ຈ່າຍໃນການຂົນສົ່ງຕົວຢ່າງ ສຳລັບຈຸດທົດລອງ ຂົນສົ່ງຕົວຢ່າງແບບເຊື່ອມສານ (iSRS) **(In progress)**

- ລໍຖ້າຂໍ້ຕົກລົງອະນຸມັດ

**CHALLENGES:**

MF35 ຄ່າໃຊ້ຈ່າຍຂົນສົ່ງຕົວຢ່າງມີຂະບວນການອະນຸມັດທີ່ໃຊ້ເວລາດົນ ອາດເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳຂົນສົ່ງຕົວຢ່າງແບບເຊື່ອມສານລ້າຊ້າ.

**KEY ACTIONS:**

ຕິດຕາມໃກ້ຊິດກ່ຽວກັບການອະນຸມັດງົບປະມານຄ່າຂົນສົ່ງຕົວຢ່າງແບບເຊື່ອມສານ

# IBF1 : Lab Systems Strengthening

**ສັນຍາປະກັນເຄື່ອງ GenXpert (GeneXpert Instruments under the GeneXpert Warranty Extension Plus Agreement)**

**CURRENT STATUS:**

**ສັນຍາທີ່ເຂົ້າປະກັນເຄື່ອງ GenXpert ສ່ວນໃຫຍ່ (56ເຄື່ອງ) ຈະສິ້ນສຸດໃນເດືອນ ພະຈິກ ປີ 2026 ນີ້.**

**CHALLENGES:**

ຍັງບໍ່ທັນມີງົບປະມານໃນການຕໍ່ສັນຍາຮັບປະກັນເຄື່ອງ GenXpert ຫຼັງຈາກສິ້ນສຸດສັນຍາ

**KEY ACTIONS:**

# ຂໍ້ສະເໜີ

1. ພິຈາລະນາການອະນຸມັດຂໍ້ຕົກລົງ ເພື່ອຮັບປະກັນໃຫ້ແຕ່ລະກິດຈະກຳໄດ້ຈັດຕັ້ງປະຕິບັດທັນຕາມເວລາທີ່ກຳນົດໄວ້.
2. ເລັ່ງຂະບວນອະນຸມັດເງິນຄ່າຂົນສົ່ງຕົວຢ່າງແບບເຊື່ອມສານ.
3. ຄົ້ນຄວ້າງົບປະມານທີ່ໃຊ້ສຳລັບການສືບຕໍ່ຮັບປະກັນເຄື່ອງ GenXpert.
4. ທີມງານ Global fund ໃນການທົບທວນແລະມີຄ□າເຫັນອະນຸມັດການນ□າໃຊ້ງົບປະມານກິດຈະກຳທີ່ເພີ່ມເຂົ້າໃໝ່ 2 ກິດຈະກ□າ

# Thank you very much